ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊຳລະສະສາງ

ເລກທີ 959 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 24 ພະຈິກ 2021

# ໜັງສືແຈ້ງ

ເຖິງ: ບໍລິສັດ ພູສີ ກຣຸບ ຈຳກັດຜູ້ດຽວ.

ເລື່ອງ: ການເຄື່ອນໄຫວທຸລະກິດຊັບສິນດິຈິຕອນ ຂອງ ບໍລິສັດ ພູສີ ກຣຸບ ຈຳກັດ.

- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021;
- ອີງຕາມໜັງສືສະເໜີ ຂອງບໍລິສັດ ພູສີ ກຣຸບ ຈຳກັດ ສະບັບເລກທີ 892/ພສກ, ລົງວັນທີ 29 ກັນຍາ 2021;
- ອີງຕາມ ການປະສານສົມທົບ ແລະ ເອກະພາບກັນລະຫວ່າງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ທະນາຄານແຫ່ງ ສປປ ລາວ.

ກົມຄຸ້ມຄອງລະບົບຊຳລະສະສາງ (ຄລຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການເຄື່ອນໄຫວທຸລະກິດຊັບສິນດິຈິຕອນ ຂອງ ບໍລິສັດ ພູສີ ກຣຸບ ຈຳກັດ (ພສກ) ຄື: ການໂຄສະນາ ແລະ ເປີດໂຕ ກ່ຽວກັບການດຳເນີນທຸລະກິດເງິນຄຣິບໂຕໃນສື່ອອນລາຍຂອງ Facebook Page ພາຍໃຕ້ຊື່ Welnance, ເວັບໄຊ້ Welnance.com ແລະ Platform ອອນລາຍອື່ນໆ (Twitter, YouTube, Instagram) ເປັນຕົ້ນ: ການອອກຫຼຽນ Welcoin ທີ່ເປັນເງິນຄຣິບໂຕ ຊຶ່ງສາມາດແລກປ່ຽນໄດ້ໃນ Trust Wallet ແລະ ການເປີດໂຕ Welnance Defi ໃນວັນທີ 11 ພະຈິກ 2021 ທີ່ຜ່ານມາ ຊຶ່ງບໍ່ສອດຄ່ອງກັບ ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 09 ພະຈິກ 2021 ຊຶ່ງເນື້ອໃນໄດ້ລະບຸວ່າ "*ທຸລະກິດຊັບສິນດິຈິຕອນທີ່ອະນຸຍາດໃຫ້ດຳເນີນທຸລະກຳທົດລອງຢູ່ ສປປ ລາວ ມີ 02 ປະເພດຄື: ❶ ການຂຸດຄົ້ນເງິນຄຣິບໂຕ; ❷ ການຊື້-ຂາຍເງິນຄຣິບໂຕ*" ໂດຍການຂຸດຄົ້ນເງິນຄຣິບໂຕ ຕ້ອງໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ການຊື້-ຂາຍເງິນຄຣິບໂຕ ຕ້ອງໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ຢ່າງເປັນທາງການກ່ອນ ຈຶ່ງສາມາດດຳເນີນທຸລະກິດໄດ້.

ສະນັ້ນ, ເພື່ອໃຫ້ສອດຄ່ອງກັບລະບຽບການ ຄລຊ ຈຶ່ງແຈ້ງມາຍັງທ່ານໃຫ້ຈັດຕັ້ງປະຕິບັດດັ່ງນີ້:

1. ພສກ ຕ້ອງລົບໂຄສະນາທັງໝົດທີ່ໄດ້ເຜີຍແຜ່ໃນຊ່ອງທາງຕ່າງໆກ່ອນໜ້ານີ້ ແລະ ຕ້ອງລາຍງານຄືນ ມາຍັງ ຄລຊ **ພາຍໃນ 5 ວັນລັດຖະການ** ພາຍຫຼັງໄດ້ຮັບໜັງສືແຈ້ງສະບັບນີ້;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

2. ພສກ ຕ້ອງຢຸຕິທຸກການເຄື່ອນໄຫວທຸລະກິດ ກ່ຽວກັບບໍລິສັດ Welnance ໂດຍສະເພາະ ຫຼຽນ Welcoin ແລະ Welnance Defi ລວມທັງຢຸຕິການໂຄສະນາໃດໆ ທີ່ຕິດພັນກັບທຸລະກິດຊັບສິນດິຈິຕອນ ຈົນກວ່າຈະໄດ້ຮັບອະນຸຍາດຢ່າງເປັນທາງການ;

3. ພສກ ຕ້ອງປະຕິບັດຕາມໜັງສືແຈ້ງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຄັ່ງຄັດ, ຫາກມີການລະເມີດ ຄລຊ ຈະປະຕິບັດມາດຕະການຕໍ່ການກະທຳທີ່ບໍ່ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017, ຂໍ້ຕົກລົງວ່າດ້ວຍການເຮັດທົດລອງທຸລະກຳຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021 ແລະ ບັນດານິຕິກຳອື່ນໆທີ່ກ່ຽວຂ້ອງ ລວມທັງຫ້າມດຳເນີນທຸລະກິດ ກ່ຽວກັບຊັບສິນດິຈິຕອນໃນອະນາຄົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງລະບົບ...

ສຸລິສັກ ທຳມະວົງ

<u>ບ່ອນສົ່ງ:</u>

- ກົມເຕັກໂນໂລຊີດິຈິຕອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ 1 ສະບັບ